# Savan PAD ຈົດໝາຍແຈ້ງຂ່າວ

31 ພຶດສະພາ 2019

1

## ແນວທາງນະໂຍບາຍຂອງໂຄງການ ພັດທະນາກະສິກຳ ແບບມີສ່ວນຮ່ວມ Savan PAD

ໄລຍະຂອງໂຄງການ Savan PAD ແມ່ນເລີ່ມແຕ່ ເດືອນ 6 ປີ 2017 ຫາ ເດືອນ 6 ປີ 2022 (5 ປີ), ເປັນໂຄງການທີ່ຈັດຕັ້ງປະຕິບັດກິດຈະກຳໂດຍການຄຸ້ມຄອງຂອງແຂວງສະຫວັນນະເຂດ.

ຈຸດປະສົງຫຼັກຂອງໂຄງການ Savan PAD ແມ່ນເພີ່ມລາຍຮັບໃຫ້ແກ່ຊາວກະສິກອນໂດຍຜ່ານການຈັດຕັ້ງປະຕິບັດກິດຈະກຳໃນ 3 ດ້ານຄື: ດ້ານເຕັກນິກກະສິກຳ(ຍົກສະມັດຕະພາບການຜະລິດ), ດ້ານການຕະຫຼາດ(ຜະລິດຕາມຄວາມຕ້ອງການຂອງຕະຫຼາດ; ສົ່ງເສີມການຂາຍຜົນຜະລິດ; ຄຸ້ມຄອງບໍລິຫານການປູກຝັງ), ດ້ານຊົນລະປະທານ(ເພີ່ມປະສິດທິຜົນການໃຊ້ນ້ຳຊົນລະປະທານ) ໂຄງການ Savan PAD ຈັດກິດຈະກຳເພື່ອສ້າງຄວາມສາມາດໃຫ້ພະນັກງານລັດ, ກຸ່ມຜູ້ນຳໃຊ້ນ້ຳ ແລະ ກຸ່ມຊາວນາ.

### ຮູບແບບຂອງໂຄງການ

**ເພີ່ມລາຍຮັບໃຫ້ຊາວນາ**

- ການຜະລິດແນໃສ່ຄວາມຕ້ອງການຂອງຕະຫຼາດ
- ສົ່ງເສີມການຂາຍຜົນຜະລິດ
- ຍົກສະມັດຕະພາບການຜະລິດ
- ປັບປຸງການຄຸ້ມຄອງບໍລິຫານການປູກຝັງ
- ເພີ່ມປະສິດທິຜົນການນຳໃຊ້ນ້ຳຊົນລະປະທານ (ຮູບແບບຂອງໂຄງການ PIAD)

ການມີສ່ວນຮ່ວມ

ການພັດທະນາຂີດຄວາມສາມາດຂອງ ພະນັກງານວິຊາການ ຂັ້ນແຂວງ ແລະ ຂັ້ນເມືອງ ໃນການຈັດຕັ້ງປະຕິບັດໂຄງການ ແລະ ການວາງແຜນງົບປະມານ ← DPI

### ①ເຕັກນິກດ້ານການປູກເຂົ້າ



ຝຶກອົບຮົມການເຮັດນ້ຳສະໝຸນໄພໄລ່ແມງໄມ້

- ຊີ້ນຳຊາວນາໃນການແກ້ໄຂບັນຫາເຊັ່ນ: ການໃສ່ປຸ໋ຍຫຼາຍໂພດ ຫຼື ນ້ອຍໂພດ, ການນຳໃຊ້ຢາກຳຈັດສັດຕູພືດບໍ່ຖືກວິທີ, ການບົວລະບັດຮັກສາບໍ່ທົ່ວເຖິງຕໍ່ຄວາມເສຍຫາຍຈາກການທຳລາຍຂອງແມງໄມ້, ຄຸນນະພາບ ຫຼື ຜົນຜະລິດຫຼຸດລົງຍ້ອນເຕັກນິກການຜະລິດຍັງອ່ອນ.

### ②ວາງແຜນການຜະລິດ ແລະ ປະຕິບັດຕົວຈິງອີງໃສ່ຄວາມຕ້ອງການຂອງຕະຫຼາດ

- ສຶກສາອົບຮົມເພື່ອປ່ຽນແນວຄວາມຄິດຂອງຊາວນາຫັນມາປູກພືດໃຫ້ຖືກກັບຄວາມຕ້ອງການຂອງຕະຫຼາດ.
- ແນະນຳໃຫ້ຊາວນາເຂົ້າໃຈແນວໂນ້ມການປ່ຽນແປງຂອງຕະຫຼາດ ແລະ ຊີ້ນຳການວາງແຜນການຜະລິດ ແລະ ແຜນລາຍຮັບ-ລາຍຈ່າຍ.



ການສຳຫລວດຕະຫຼາດໂດຍຊາວນາ

- ການສົ່ງເສີມການຂາຍເຊັ່ນ: (ການປູກຜັກໃນເຮືອນຮົ່ມ, ການປູກໂດຍບໍ່ໃຊ້ສານເຄມີ), ແລະ ການທົດລອງປູກຜັກຊະນິດໃໝ່ໆ ຊະນິດທີ່ນຳເຂົ້າມາຈາກຕ່າງປະເທດ ແລະ ຕະຫຼາດຕ້ອງການເຊັ່ນ: ໝາກແຕງຊຸກີນີ, ໝາກກະຈຽບຂຽວ ແລະ ຫົວຜັກກາດຂາວ. ນອກຈາກນີ້,ທາງໂຄງການຍັງສອນເຕັກນິກ ແລະ ວິທີການປູກໃຫ້ກຸ່ມຊາວນາອີກດ້ວຍ.



ແຕງຊຸກີນີ



ໝາກກະຈຽບຂຽວ



ຫົວຜັກກາດຂາວ

## ③ຮອງຮັບການຂະຫຍາຍຕະຫຼາດ ແລະ ສົ່ງເສີມການຂາຍໂດຍພະນັກງານລັດ

- ນອກຈາກຊາວນາຂາຍຜົນຜະລິດສູ່ຕະຫຼາດໂດຍກົງແລ້ວຍັງມີພະນັກງານຈາກພະແນກອຸດສາຫະກຳ ແລະ ການຄ້າ ມາຊ່ວຍຫາຕະຫຼາດຮອງຮັບສິນຄ້າຂອງຊາວນາທີ່ຜະລິດໄດ້ ເພື່ອເປັນການເປີດໂອກາດໃນການຊື້ຂາຍລະຫວ່າງ ບໍລິສັດທ້ອງຖິ່ນກັບກຸ່ມຊາວນາ ແລະ ໄດ້ຕິດຕໍ່ກັບຮ້ານອາຫານທ້ອງຖິ່ນ ແລະ ບໍລິສັດໃນທ້ອງຖິ່ນ ເພື່ອເປັນການຈັບຄູ່ທາງການຕະຫຼາດລະຫວ່າງອຸປະສົງ ແລະ ອຸປະທານ.

## ④ສ້າງຄວາມສາມາດໃນດ້ານການຄຸ້ມຄອງບໍລິຫານນ້ຳ ແລະ ລະບົບຄອງເໝືອງ

- ສອນເຕັກນິກ ໃນການສ້ອງແປງຄອງເໝືອງໂດຍອີງໃສ່ງົບປະມານ ແລະ ບຸກຄົນມີຈຳກັດ.
- ສອນເຕັກນິກ ໃນດ້ານການວິໄຈ ແລະ ສັງລວມກ່ຽວກັບການນຳໃຊ້ພະລັງງານໄຟຟ້າໃນການສູບນ້ຳໃຫ້ນ້ອຍທີ່ສຸດ.
- ສອນເຕັກນິກ ໃນດ້ານການປູກຝັງ, ປັບປຸງຄຸ້ມຄອງລະບົບບັນຊີຂອງກຸ່ມຜູ້ນຳໃຊ້ນ້ຳ ແລະ ສອນເຕັກນິກບໍລິຫານການແຈກຈ່າຍນ້ຳ.

## ບ້ານເປົ້າໝາຍຂອງໂຄງການ Savan PAD

ພາຍໃນເດືອນ 5 ປີ 2019, ໂຄງການໄດ້ຈັດກິດຈະກຳໃນ 6 ຕົວເມືອງ 8 ໂຄງການ ໃນແຂວງສະຫວັນນະເຂດ.

**ໂຄງການຕົ້ນແຫນ ເມືອງໄຊບູລີ**
ປັບປຸງເຕັກນິກສ້ອມແປງຄອງເໝືອງ,ປະຫຍັດພະລັງງານໄຟຟ້າໃນການສູບນ້ຳ,ປັບປຸງການປູກໝາກເຜັດອື່ນໆ...

**ໂຄງການພະນົມໄຊເມືອງພະລານໄຊ**
ປັບປຸງເຕັກນິກການປູກເຂົ້າ,ເຕັກນິກການປູກຜັກ,ປັບປຸງລະບົບບັນຊີຂອງກຸ່ມຜູ້ນຳໃຊ້ນ້ຳອື່ນໆ...

**ໂຄງການສົມສະອາດເມືອງໄຊບູລີ**
ປັບປຸງລະບົບບັນຊີກຸ່ມຜູ້ນ້ຳໃຊ້ນ້ຳ ແລະ ເຕັກນິກການປູກເຂົ້າ ແລະ ອື່ນໆ.....

**ໂຄງການໂພນສົມນະຄອນໄກສອນ**
ທົດລອງການປູກຜັກຊະນິດໃໝ່ໆ,ສົ່ງເສີມການຂາຍ, ປັບປຸງເຕັກນິກການປູກຜັກປອດສານພິດອື່ນໆ...




**ໂຄງການໂພນທອງ-ດອນແຍງເມືອງຈຳພອນ**
ປັບປຸງເຕັກນິກການປູກເຂົ້າ,ທົດລອງປູກພືດຊະນິດໃໝ່ໆ, ເຕັກນິກສ້ອມແປງຄອງເໝືອງອື່ນໆ...

**ໂຄງການເຊສາລະລອງເມືອງທ່າປາງທອງ**
ວາງແຜນການປູກ,ເຕັກນິກປູກຜັກ,ເຕັກນິກປູກເຂົ້າ, ການປ້ອງກັນແມງໄມ້,ປັບປຸງລະບົບບັນຊີຂອງກຸ່ມຜູ້ນຳໃຊ້ນ້ຳອື່ນໆ....

**ໂຄງການແກ້ງກອກເໜືອເມືອງຈຳພອນ**
ປັບປຸງລະບົບບັນຊີຂອງກຸ່ມຜູ້ນຳໃຊ້ນ້ຳ,ເຕັກນິກການປູກເຂົ້າອື່ນໆ...

**ໂຄງການໜອງບົວທອງເມືອງຊົນນະບູລີ**
ປັບປຸງເຕັກນິກການປູກເຂົ້າ,ເຕັກນິກການປູກຜັກ,ເຕັກນິກການສ້ອມແປງຄອງເໝືອງອື່ນໆ...

ໃນປີ 2019 ນີ້ ພວກເຮົາຈະໄດ້ເລືອກເອົາບ້ານເປົ້າໝາຍຂອງໂຄງການອີກ 4 ແຫ່ງ.

## ຜົນຮັບຂອງການເຮັດນາແຊງໃນປີຜ່ານມາ (ແຈ້ງລ່ວງໜ້າ)

ໃນປະຈຸບັນນີ້ໂຄງການກຳລັງເກັບກຳ ແລະ ສັງລວມຂໍ້ມູນຂອງກິດຈະກຳການເຮັດນາແຊງຂອງປີ 2018/2019. ມາຮອດປະຈຸບັນນີ້, ເຫັນວ່າມີຜົນດີຫຼາຍຢ່າງປາກົດຂຶ້ນເຊັ່ນ: ບາງຄົນໄດ້ເວົ້າວ່າ “ເນື້ອທີ່ໃນການຈ່າຍນ້ຳທັງໝົດໃນ 7 ໂຄງການໄດ້ເພີ່ມຂຶ້ນ 1,4 ເທົ່າ ເມື່ອສົມທຽບກັບປີກ່ອນ ຜົນຜະລິດເຂົ້າໄດ້ເພີ່ມຂຶ້ນ”. ບາງໂຄງການກໍ່ໄດ້ເກັບເງິນ ແລະ ຈ່າຍຄ່ານຳໃຊ້ນ້ຳໄດ້ໝົດແລ້ວ. ລາຍລະອຽດຈະລາຍງານໃນສະບັບຕໍ່ໄປ.



ຊາວນາກຳລັງພ້ອມກັນຕິດຕັ້ງທໍ່ສົ່ງນ້ຳ


ຈົດໝາຍແຈ້ງຂ່າວຂອງໂຄງການ ສະຫວັນເພັດ
ໂຄງການພັດທະນາ ກະສິກຳ ແບບມີສ່ວນຮ່ວມ ແຂວງສະຫວັນນະເຂດ (ສະຫວັນເພັດ)
ຕູ້ ປ.ນ. 16, ຂະແໜງຊົນລະປະທານ, ພະແນກ ກະສິກຳ ແລະ ປ່າໄມ້ ແຂວງສະຫວັນນະເຂດ, (ໂທ : 041-252497)